PROVIDED BY
ILW.COM The leading immigration law publisher
http://www.ilw.com

ສັນຊາດ

24 ກັນຍາ 2001

# ຂໍ້ມູນກ່ຽວກັບການຕັດສັນຊາດເປັນພົລເມືອງສໍາຫລັບສມາຊິກຂອງ ປະຊາຄົມຊາວ ມົ້ງ ແລະ ລາວ

## ທ່ານຢາກເປັນພົລເມືອງຂອງສຫະຣັຖແຕ່ມີຄວາມວິຕົກກ່ຽວກັບການສອບເສັງພາສາອັງກິດແລະໜ້າທີ່ພົລເມືອງດີ ແມ່ນຫລືບໍ່?

ທ່ານສາມາດຕອບວ່າ "ແມ່ນແລ້ວ" ຕໍ່ຄໍາຖາມຂໍ້ໃດຂໍ້ນຶ່ງໃນບັນດາຄໍາຖາມຕໍ່ລົງໄປນີ້ ໄດ້ຫລືບໍ່?

1. ທ່ານຖືກຮັບເອົາເຂົ້າມາສຫະຣັຖໃນຖານະເປັນອົພຍົບຈາກປະເທດລາວ (ໂດຍອີງຕາມໝວດທີ 207 ຂອງກົດໝາຍວ່າດ້ວຍຄົນເຂົ້າເມືອງແລະຕັດສັນຊາດ) ແລະ ທ່ານໄດ້ສນັບສນູນກອງທັບຂອງສຫະຣັຖ ໂດຍໄດ້ຮັບໃຊ້ໃນໜ່ວຍກອງໂຈມພິເສດ (SGU) ຫລືວ່າ ໄດ້ຮັບໃຊ້ໃນກອງກໍາລັງທີ່ບໍ່ແມ່ນກໍາລັງປະຈໍາການປົກກະຕິ ທີ່ປະຕິບັດງານອອກມາຈາກຖານທີ່ໝັ້ນໃນປະເທດລາວໃນເວລາໃດເວລານຶ່ງ ລະຫວ່າງວັນທີ 28 ກຸມພາ 1961 ຫາວັນທີ 18 ກັນຍາ 1978 ແມ່ນຫລືບໍ່? ຫລືວ່າ

2. ທ່ານເປັນພັລຍາໝ້າຍຂອງທະຫານເກົ່າປະເພດໃດປະເພດນຶ່ງທີ່ບັລຍາຍມາຂ້າງເທິງນັ້ນ ທີ່ໄດ້ເສັຍຊີວິດໄປ ຫລືໄດ້ຖືກຂ້າຕາຍໃນປະເທດລາວ ໄທ ຫລືວຽດນາມ ແລະທ່ານໄດ້ຖືກຮັບເອົາເຂົ້າມາສຫະຣັຖ ໃນຖານະເປັນອົພຍົບຈາກປະເທດລາວ (ໂດຍອີງຕາມໝວດທີ 207 ຂອງກົດໝາຍວ່າດ້ວຍຄົນເຂົ້າເມືອງແລະຕັດສັນຊາດ) ແມ່ນຫລືບໍ່? ຫລືວ່າ

3. ທ່ານໄດ້ແຕ່ງດອງກັບທະຫານເກົ່າປະເພດໃດປະເພດນຶ່ງທີ່ກ່າວມາຂ້າງເທິງ ໃນມື້ທີ່ທະຫານເກົ່າຜູ້ນັ້ນ ຍື່ນຄໍາຮ້ອງຂໍເຂົ້າມາຢູ່ໃນສຫະຣັຖ ໃນຖານະເປັນອົພຍົບຈາກປະເທດລາວ ແລະທ່ານຖືກຮັບເອົາເຂົ້າມາໃນສຫະຣັຖໃນຖານະເປັນອົພຍົບ(ໂດຍອີງຕາມໝວດທີ 207 ຂອງກົດໝາຍວ່າດ້ວຍຄົນເຂົ້າເມືອງແລະຕັດສັນຊາດ) ແມ່ນຫລືບໍ່?

ຖ້າຫາກທ່ານຕອບວ່າ "ແມ່ນແລ້ວ" ຕໍ່ຄຳຖາມຂໍ້ໃດຂໍ້ນຶ່ງໃນບັນດາຄຳຖາມເຫລົ່ານີ້ ຕາມກົດໝາຍວ່າດ້ວຍການຕັດສັນຊາດຂອງນັກຮົບເກົ່າມົ້ງແຫ່ງປີ 2000 ແລ້ວ ທ່ານກໍຈະ ບໍ່ ຕ້ອງໄດ້ເສັງພາສາອັງກິດ ແລະທ່ານຈະສາມາດສອບເສັງເປັນພົລເມືອງໃນພາສາທີ່ທ່ານເລືອກເອົາໄດ້ໃນບົດສອບທີ່ງ່າຍກ່ວາທຳມະດາອີກ. ທ່ານຕ້ອງເອົານາຍພາສາຂອງທ່ານເອງໄປນຳ ໃນມື້ທີ່ທ່ານໄປສອບເສັງນັ້ນ.

## ເຊີນຊາບ: ກຳໜົດວັນສຸດທ້າຍສຳຫລັບການຍື່ນໃບສມັກຂໍເປັນພົລເມືອງພາຍໃຕ້ກົດໝາຍວ່າດ້ວຍການຕັດສັນຊາດຂອງນັກຮົບເກົ່າມົ້ງ ສຳຫລັບທະຫານແລະພັລຍາ ແມ່ນ ວັນທີ 26 ພຶສຈິກາ 2001 ສຳຫລັບຜູ້ເປັນນາງໝ້າຍສາມີຕາຍຢູ່ເອເຊັຍຕາເວັນອອກສ່ຽງໃຕ້ ແມ່ນ ວັນທີ 1 ພຶສພາ 2002

ເປັນການສຳຄັນ ທີ່ສຸດ ທີ່ທ່ານຕ້ອງ ຍື່ນໃບຄຳຮ້ອງຂໍຕັດສັນຊາດ **(Form N-400)** ກ່ອນຫລືວ່າໃນວັນທີ 26 ພຶສຈິກາ 2001 (ກ່ອນຫລືວ່າໃນວັນທີ 1 ພຶສພາ 2002 ສຳຫລັບຜູ້ເປັນໝ້າຍໃນເອເຊັຍຕາເວັນອອກສ່ຽງໃຕ້). ຖ້າຫາກທ່ານໄດ້ຍື່ນໃບຄຳຮ້ອງຂໍຕັດສັນຊາດກ່ອນໜ້ານີ້ແລ້ວ ບໍ່ຕ້ອງຍື່ນໃໝ່ອີກ.

ເວລາທ່ານມາສຳພາດ ທ່ານຕ້ອງເອົາຫລັກຖານທີ່ແສດງວ່າທ່ານເປັນທະຫານມານຳດ້ວຍ. ຫລັກຖານນັ້ນ ຈະແມ່ນອັນໃດກໍໄດ້ໃນບັນດາສິ່ງຕ່າງໆຕໍ່ລົງໄປນີ້:

1. ເອກກະສານສຳເນົາດັ້ງເດີມ ທີ່ອອກໃຫ້ທ່ານຢູ່ໃນຫລືຢູ່ອ້ອມແອ້ມປະເທດລາວ ຫລື
2. ໜັງສືຢັ້ງຢືນຈາກຜູ້ບັງຄັບບັນຊາຂອງທ່ານ ຫລື
3. ໜັງສືຢັ້ງຢືນສອງໃບ ຈາກຄົນອື່ນໆທີ່ຮູ້ເຫັນດ້ວຍຕົນເອງວ່າທ່ານເຄີຍເປັນທະຫານມາກ່ອນ. ຜູ້ເຮັດໃບຢັ້ງຢືນໃຫ້ ຕ້ອງແມ່ນຜູ້ທີ່ເຄີຍເປັນທະຫານໃນໜ່ວຍກອງໂຈມພິເສດ ຫລືໃນກອງກຳລັງທີ່ບໍ່ແມ່ນກຳລັງປະຈຳການປົກກະຕິ ທີ່ປະຕິບັດງານເພື່ອສນັບສນູນສຫະຣັຖ ຫລື
4. ຫລັກຖານອື່ນໆ ເຊັ່ນເອກກະສານບັນທຶກ ທີ່ໄດ້ມາຈາກບັນດາອົງການທີ່ເກັບຮັກສາບັນທຶກກ່ຽວກັບປະວັດການຮັບໃຊ້ໃນກອງທັບຂອງບັນດານັກຮົບເກົ່າມົ້ງ/ລາວ ແລະ

ຄອບຄົວຂອງເຂົາເຈົ້າ.

ຕາມປົກກະຕິແລ້ວ ແຜນກກວດຄົນເຂົ້າເມືອງແລະຕັດສັນຊາດ (INS) ຈະສາມາດຮູ້ໄດ້ຈາກບັນທຶກຂອງທາງແຜນກເອງວ່າ ທ່ານເຂົ້າມາຢູ່ໃນສຫະຣັຖໃນຖານະອົພຍົບຫລືບໍ່. ຢ່າງໃດກໍຕາມ ຖ້າຫາກທ່ານມີເອກກະສານເປັນຫລັກຖານແສດງໃຫ້ຮູ້ວ່າ ທ່ານເຂົ້າມາຢູ່ໃນສຫະຣັຖໃນຖານະໃດນັ້ນ ຈົ່ງນຳຕິດໂຕມາພ້ອມ. ຖ້າຫາກວ່າຈຳເປັນ ທາງແຜນກ INS ກໍອາດຈະຮ້ອງຂໍເອົາຂໍ້ມູນກ່ຽວກັບການຮັບໃຊ້ຂອງທ່ານຢູ່ໃນກອງທັບຫລືໃນໜ່ວຍກອງໂຈນພິເສດນັ້ນ ຈາກຣັຖມົນຕີກະຊວງປ້ອງກັນປະເທດສຫະຣັຖ ເພື່ອຕັດສິນວ່າທ່ານມີສິດໄດ້ເປັນພົລເມືອງຂອງສຫະຣັຖ ພາຍໃຕ້ກົດໝາຍທີ່ວ່ານີ້ຫລືບໍ່.

---

ຕາມຂັ້ນຕອນປົກກະຕິຂອງການຕັດສັນຊາດນັ້ນ ທ່ານຈະບໍ່ຕ້ອງໄດ້ເສັງພາສາອັງກິດ ຖ້າຫາກວ່າ:

- ທ່ານມີອາຍຸ 55 ປີຫລືແກ່ກວ່ານັ້ນ ແລະໄດ້ດຳລົງຊີວິດຢູ່ໃນສຫະຣັຖໃນຖານະຜູ້ອາໃສຢູ່ຖາວອນຫລືມີບັດຂຽວ ເປັນເວລາ 15 ປີ ຫລືດົນກວ່ານັ້ນ ຫລືວ່າ

- ທ່ານມີອາຍຸ 50 ປີຫລືແກ່ກວ່ານັ້ນ ແລະໄດ້ດຳລົງຊີວິດຢູ່ໃນສຫະຣັຖໃນຖານະຜູ້ອາໃສຢູ່ຖາວອນຫລືມີບັດຂຽວ ເປັນເວລາ 20 ປີ ຫລືດົນກວ່ານັ້ນ.

ນອກນີ້ແລ້ວ ທາງແຜນກຍັງຈະໃຫ້ທ່ານສອບເສັງກ່ຽວກັບໜ້າທີ່ພົລເມືອງດີ ໃນບົດສອບທີ່ງ່າຍກວ່າທຳມະດາອີກ ຖ້າຫາກວ່າ:

- ທ່ານມີອາຍຸ 65 ປີຫລືແກ່ກວ່ານັ້ນ ແລະໄດ້ດຳລົງຊີວິດຢູ່ໃນສຫະຣັຖໃນຖານະຜູ້ອາໃສຢູ່ຖາວອນຫລືມີບັດຂຽວ ເປັນເວລາ 20 ປີ ຫລືດົນກວ່ານັ້ນ.

ທ່ານອາດມີສິດໄດ້ຮັບການຍົກເວັ້ນຈາກການສອບເສັງພາສາອັງກິດ ແລະ ອາດໄດ້ຮັບອະນຸຍາດໃຫ້ສອບເສັງໜ້າທີ່ພົລເມືອງດີໃນບົດສອບທີ່ງ່າຍກວ່າທຳມະດາ ພາຍໃຕ້ຂັ້ນຕອນປົກກະຕິຂອງການຕັດສັນຊາດນັ້ນ ຖ້າຫາກວ່າ:

- ທ່ານມີຄວາມພິການທາງດ້ານພັທນາການ ທາງຮ່າງກາຍ ຈິດໃຈ ຫລືສມອງແບບໃດແບບນຶ່ງທີ່ໄດ້ຮັບການຍົກເວັ້ນຈາກທາງການ. ຖ້າເປັນເຊັ່ນນັ້ນ ທ່ານຄວນຍື່ນສເນີໃບຢັ້ງຢືນ

ຈາກນາຍແພດເພື່ອຂໍຍົກເວັ້ນຍ້ອນເຫດຜົນດ້ານຄວາມພິການດັ່ງກ່າວ (Form N-648) ແລ້ວທາງແຜນກ INS ຈະພິຈາລະນາກໍລະນີຂອງທ່ານຄືນໃໝ່ ເພື່ອຕັດສິນວ່າທ່ານມີສິດໄດ້ຮັບການຍົກເວັ້ນຫລືບໍ່.